# ການກວດສອບຄັດກອງດ້ານໂຕເລກ ຊັ້ນ Year 1



**ຂໍ້ມູນສໍາລັບພໍ່ແມ່ ແລະ ຜູ້ດູແລ**

## ການກວດສອບຄັດກອງດ້ານໂຕເລກ ຊັ້ນ Year 1 ແມ່ນຫຍັງ?

ການກວດສອບຄັດກອງໂຕເລກ Year 1 (Year 1 Number Screening Check) ເປັນການປະເມີນທົ່ວຣັດແບບສັ້ນໆທີ່ຈະຊ່ວຍໃຫ້ຄູສອນຮູ້ວ່າລູກຂອງທ່ານມີຄວາມຄືບໜ້າແນວໃດໃນດ້ານໂຕເລກເບື້ອງຕົ້ນ. ການກວດສອບແບບຄັດກອງນີ້ຈະສັງເກດວິທີທີ່ລູກຂອງທ່ານສາມາດຈື່ຈໍາໂຕເລກ, ລຽງລໍາດັບໂຕເລກ, ນັບເລກ, ປຽບທຽບ ແລະບວກລົບເລກ.

ລູກຂອງທ່ານຈະນັ່ງກັບຄູສອນແລະຈະຖືກຂໍໃຫ້ຕອບປະມານ 30 ຂໍ້. ການກວດສອບປົກກະຕິໃຊ້ເວລາ **10 ຫາ 15** ນາທີ. Year 1 Number Screening Check ໄດ້ຮັບການອອກແບບຢ່າງລະມັດລະວັງເພື່ອບໍ່ໃຫ້ເປັນຄວາມກົດດັນສໍາລັບລູກຂອງທ່ານ. ຖ້າລູກຂອງທ່ານມີບັນຫາ ຄູສອນຈະຢຸດການກວດສອບ.

ຈຸດປະສົງຫຼັກຂອງ Year 1 Number Screening Check ແມ່ນເພື່ອສະໜອງຂໍ້ມູນໃຫ້ແກ່ຄູສອນຂອງລູກທ່ານ ເຊິ່ງຈະຊ່ວຍໃຫ້ພວກເຂົາສາມາດວາງແຜນການຮຽນຮູ້ຂອງລູກທ່ານໄດ້. ເດັກນ້ອຍຊັ້ນ Year 1 ທຸກຄົນຈະໄດ້ຮັບການປະເມີນເປັນສ່ວນບຸກຄົນໂດຍຄູສອນ.

ຖ້າຫາກວ່າທ່ານມີຄໍາຖາມໃດໆກ່ຽວກັບ Year 1 Number Screening Check ຈົ່ງຕິດຕໍ່ໂຮງຮຽນຂອງທ່ານ.

## ຄວາມຮັບຮູ້ໂຕເລກແມ່ນຫຍັງ?

ຄວາມຮັບຮູ້ໂຕເລກແມ່ນຄວາມສາມາດໃນການເຂົ້າໃຈ, ເຊື່ອມໂຍງ ແລະ ເຮັດວຽກກັບໂຕເລກໄດ້ຢ່າງມີປະສິດທິພາບເພື່ອມີສ່ວນຮ່ວມໃນຊີວິດປະຈໍາວັນ ແລະ ທໍາຄວາມເຂົ້າໃຈໂລກ. ເດັກນ້ອຍບາງຄົນອາດຈະພົບວ່າການຮັບຮູ້ໂຕເລກເປັນເລື່ອງທ້າທາຍ, ດັ່ງນັ້ນມັນເປັນສິ່ງສໍາຄັນທີ່ຈະຕ້ອງລະບຸໂຕຕົນຂອງເດັກເຫຼົ່ານີ້ໄດ້ຢ່າງໄວ. ດ້ວຍວິທີນີ້, ຄູສອນຈະສາມາດວາງແຜນການສະໜັບສະໜູນສະເພາະດ້ານທີ່ພວກເຂົາຕ້ອງການໄດ້.

## ເປັນຫຍັງການຮັບຮູ້ໂຕເລກຈຶ່ງສໍາຄັນ?

ພື້ນຖານທີ່ດີກ່ຽວກັບໂຕເລກຈະຊ່ວຍລູກຂອງທ່ານໃຫ້ເຂົ້າໃຈແນວຄວາມຄິດທາງຄະນິດສາດທີ່ຊັບຊ້ອນຫຼາຍຂຶ້ນໃນຊ່ວງຊັ້ນປີຕໍ່ມາຂອງໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມ.

## ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອດ້ານນາຍພາສາ ເພື່ອຕິດຕໍ່ໂຮງຮຽນ, ກະລຸນາໂທຫາເບີ 131 450, ບອກຜູ້ຮັບສາຍວ່າທ່ານຕ້ອງການພາສາໃດ ແລະ ຂໍໃຫ້ພວກເຂົາໂທຫາໂຮງຮຽນ. ຜູ້ຮັບສາຍຈະຊອກເອົານາຍພາສາມາຢູ່ໃນສາຍເພື່ອຊ່ວຍທ່ານໃນການສົນທະນາຂອງທ່ານ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.